e-Commerce ໃນທຸລະກິດຈິງ Thaigem.com

# Thaigem.com

## (ຮ້ານຂາຍອັນມະນີອອນໄລນ໌ທີ່ໃຫຍ່ທີ່ສຸດໃນໂລກ)




## 1. ຂໍ້ມູນເບື້ອງຕົ້ນ

ບໍລິສັດ ບັນທິຍາ ແຄ໌ ສະໂຕນ ຈຳກັດ ຫລືທີ່ໃຊ້ຊື່ວ່າ Thaigem (www. thaigem. com) ເປັນຮ້ານຂາຍອັນມະນີອອນໄລນ໌ຂອງ-ໄທທີ່ໃຫຍ່ທີ່ສຸດ ໃນໂລກ ໃນປະມານປີ 2520 ບໍລິສັດເລີ່ມດຳເນີນທຸລະກິດຈາກການທີ່ເຈົ້າຂອງຮ້ານນຳອັນມະນີພຽງບໍ່ຈັກລາຍການຈາກ-ແຂວງຈັນທະບຸລີ ຊຶ່ງເປັນແຫລ່ງອັນມະນີ ໄທທີ່ມີຊື່ສຽງແລະເປັນທີ່ຮູ້ຈັກກັນດີທົ່ວໂລກເປັນຕົວຢ່າງຕິດຕົວໄປຂາຍໃຫ້ແກ່ລູກຄ້າທີ່ສະຫລັດ ໆ ຕໍ່ມາທຸລະກິດຂອງບໍລິສັດເລີ່ມດີຂຶ້ນເລື່ອຍ ໆ ມີລູກຄ້າໃຫ້ຄວາມເຊື່ອຖືແລະໝັ້ນໃຈໃນຄຸນນະພາບຂອງອັນມະນີ ຈຶ່ງມີການແນະນຳບອກຕໍ່ກັນໄປ (Word of Mouth) ເຮັດໃຫ້ຊື່ສຽງຂອງບໍລິສັດເລີ່ມເປັນທີ່ຮູ້ຈັກໃນກຸ່ມຂອງຜູ້ປະກອບທຸລະກິດຄ້າອັນມະນີທັງໄທແລະຕ່າງປະເທດ ແລະຮູບ-ແບບການຂາຍກໍເລີ່ມ ປ່ຽນໄປສູ່ການສົ່ງແຄຕາລອກທາງໄປລົດນີຍ໌ຫລືສົ່ງໂຊສານເພື່ອແຈ້ງລາຍລະອຽດຂອງອັນມະນີໃຫ້ແກ່ລູກຄ້າ ແລະໃຊ້ໂຊ-ສັບຕິດຕໍ່ກັບລູກຄ້າຫລາຍຂຶ້ນ

ໃນປະມານປີ 2540 ກ່ອນທີ່ຈະກ້າວເຂົ້າສູ່ການດຳເນີນທຸລະກິດພານິດຍ໌ອີເລັກໂທນິກສ໌ ນອກຈາກບໍລິສັດຈະມີຄວາມສົນໃຈມຸ້ງມັ່ນເຮັດ-ທຸລະກິດສົ່ງອອກອັນມະນີ ໄປໃນຕະຫລາດຕ່າງປະເທດ ບໍລິສັດໄດ້ເລີ່ມໃຫ້ຄວາມສົນໃຈທີ່ຈະນຳອິນເທີລ໌ເນັດມາໃຊ້ປະໂຫຍດໃນການປະກອບ-ທຸລະກິດ ເພື່ອໃຊ້ເປັນເຄື່ອງມືໃນການ

ເພີ່ມປະສິດທິພາບການຕິດຕໍ່ສື່ສານກັບລູກຄ້າໃຫ້ດີຫລາຍຍິ່ງຂຶ້ນ

## 2. ຂັ້ນຕອນໃນການປະກອບທຸລະກິດ

ໃນປີ 2541 ບໍລິສັດ ບັນທິຍາ ແຄ໌ ສະໂຕນ ຈຳກັດ ໄດ້ເປີດເວັບໄຊຕ໌ Thaigem. com ໃຫ້ບໍລິການລູກຄ້າຊື້ອັນມະນີຜ່ານອອນໄລນ໌ ໃນຊ່ວງເລີ່ມຕົ້ນ ບໍລິສັດລອງທົດສໍບົດລາດດ້ວຍການບັນຈຸອັນມະນີໄວ້ໃນເວັບໄຊຕ໌ພຽງ 5 ລາຍການ ແລະມີເຈົ້າໜ້າທີ່ດຳເນີນງານໃນດ້ານພາ-ນິດຍ໌ອີເລັກໂທນິກສ໌ພຽງ 3 ຄົນ

ຫລັງຈາກເປີດໃຫ້ບໍລິການອອນໄລນ໌ມາ 18 ເດືອນ Thaigem. com ມີຜູ້ເຂົ້າຢ້ຽມຊົມກວ່າ 1 ລ້ານລາຍ ແລະມີຍອດຈຳໜ່າຍອັນມະນີສະ-ເລ່ຍເດືອນລະ 15 ລ້ານບາດໃຫ້ກັບລູກຄ້າຕ່າງປະເທດໂດຍບໍ່ມີໜ້າຮ້ານຈິງເລີຍ ຫລືຄິດເປັນສ່ວນແບ່ງຂອງຕະຫຼາດການຂາຍອັນມະນີຮ້ອຍລະ

95 ຂອງຕະຫຼາດອັນມະນີ ອອນໄລນ໌ທັງໝົດ ນອກຈາກນີ້ ບໍລິສັດໄດ້ນຳອັນມະນີໄປຝາກຂາຍກັບເວັບໄຊຕ໌ປະມູນທີ່ມີຊື່ສຽງກວ່າ 30 ເວັບ-ໄຊຕ໌ ເຊັ່ນ Ebay. com Yahoo! Auction Amazon. com Gemkey. com ເປັນຕົ້ນ

ຜູ້ທີ່ສົນໃຈຕ້ອງການຊື້ອັນມະນີຜ່ານອິນເທີລ໌ເນັດຂອງ Thaigem. com ຕ້ອງລົງທະບຽນເປັນສະມາຊິກ ໂດຍບໍ່ຕ້ອງເສຍຄ່າໃຊ້ຈ່າຍໃດ ໆ-ທັງສິ້ນ ລູກຄ້າຈະໃຊ້ອີເມລ໌ຂອງຕົນເອງແທນຊື່ບັນຊີ (User Name) ແລະກຳນົດລະຫັດຜ່ານ (Password) ດ້ວຍຕົນເອງ

ໆຂັ້ນຕອນໃນການໃຫ້ບໍລິການຂອງເວັບໄຊຕ໌ Thaigem. com ມີດັ່ງນີ້

1. ເມື່ອລົງທະບຽນເປັນສະມາຊິກຂອງ Thaigem. com ແລ້ວ ລູກຄ້າສາມາດສືບຄົ້ນ (Search) ອັນມະນີຊຶ່ງແຍກຕາມແຕ່ລະປະ-ເພດ

2. ເມື່ອພົບອັນມະນີທີ່ຕ້ອງການແລ້ວ ລູກຄ້າສາມາດເບິ່ງຂໍ້ມູນລາຍລະອຽດຂອງອັນມະນີຕ່າງ ໆ ເຊັ່ນ ລາຄາ ຂະໜາດ ຮູບຮ່າງ ສີ ແຫລ່ງວັດຖຸດິບ ແລະຄວາມໂປ່ງໃສ ເປັນຕົ້ນ

3. ເມື່ອລູກຄ້າຕົກລົງທີ່ຈະຊື້ອັນມະນີ ລູກຄ້າຈະເລືອກອັນມະນີໃສ່ຕະກ້າ (Add to Cart) ເພື່ອເລີ່ມການສັ່ງຊື້ແລະກໍ່ການຊຳລະເງິນ ໂດຍລູກຄ້າ ຈະໃຊ້ອີເມລ໌ແລະລະຫັດຜ່ານທີ່ໄດ້ລົງທະບຽນໄວ້ ເພື່ອເຂົ້າສູ່ບັນຊີຂອງຕົນເອງ

4. ໃນການຊຳລະເງິນ ລູກຄ້າສາມາດເລືອກຊຳລະເງິນດ້ວຍບັດລະເຄດິດຫລືສັ່ງຈ່າຍເຊັກກໍໄດ້ ຢ່າງໃດກໍຕາມ ບໍລິສັດຈະລວມຄິດ-ບໍລິການຄ່າສົ່ງ ອັນມະນີແບບຄົງທີ່ (Flat Rate) ເທື່ອລະ 15 ດອນລາລ໌ສະຫລັດ ຯ ໂດຍລູກຄ້າສາມາດສັ່ງຊື້ອັນມະນີຂອງ-ບໍລິສັດຈາກແຫລ່ງຕ່າງ ໆ ເຊັ່ນ Ebay. com Yahoo! Auction ແລະ Thaigem. com ເປັນຕົ້ນ ແລະສະສົມອັນມະ-ນີທີ່ຊື້ດັ່ງກ່າວພາຍໃນ 15 ມື້ ເພື່ອສົ່ງລວມກັນ ຊຶ່ງຈະຄິດຄ່າບໍລິການພຽງເທື່ອດຽວເທົ່ານັ້ນ

5. ເມື່ອຊຳລະເງິນຮຽບຮ້ອຍແລ້ວ ລູກຄ້າຈະໄດ້ຮັບລະຫັດການຮັບສັ່ງຊື້ອັນມະນີ ເພື່ອໃຊ້ອ້າງອີງໃນການກວດສອບຄວາມກ້າວໜ້າຂອງ-ການສັ່ງຊື້ ແລະສົ່ງອັນມະນີຕໍ່ໄປ

6. ບໍລິສັດຈະຍັງບໍ່ຈັດສົ່ງສິນຄ້າໃຫ້ແກ່ລູກຄ້າຈົນກວ່າຈະໄດ້ຮັບການແຈ້ງຈາກ Escrow ວ່າໄດ້ຮັບການຊຳລະເງິນຈາກລູກຄ້າແລ້ວ ເມື່ອໄດ້ຮັບການ ແຈ້ງຈາກ Escrow ບໍລິສັດຈະສົ່ງສິນຄ້າໃຫ້ແກ່ລູກຄ້າໂດຍໃຊ້ບໍລິການຂອງ FedEx ຊຶ່ງຈະສົ່ງເຖິງມືຜູ້ຮັບພາຍ-ໃນເວລາປະມານ 2-3 ມື້

7. ຫລັງຈາກທີ່ລູກຄ້າຮັບອັນມະນີຈາກແລ້ວ ລູກຄ້າມີເວລາ 2 ມື້ໃນການກວດສອບອັນມະນີແລະຍົກເລີກການສັ່ງຊື້ໄດ້ໂດຍບໍ່ຕ້ອງເສຍຄ່າ-ໃຊ້ຈ່າຍ ໃດ ໆທັງສິ້ນ ໂດຍເຈົ້າຫນ້າທີ່ຂອງ FedEx ຈະມາຮັບອັນມະນີກັບຄືນໃຫ້ແກ່ Thaigem. com

8. ໃນກໍລະນີທີ່ລູກຄ້າຮູ້ສຶກພໍໃຈແລະບໍ່ຕ້ອງການຄືນອັນມະນີ Escrow ຈະສັ່ງຈ່າຍເງິນຄ່າອັນມະນີໃຫ້ແກ່ Thaigem. com ທັນທີ

### 3. ເທັກໂນໂລຍີ

ໆThaigem. com ເລີ່ມຕົ້ນພັດທະນາລະບົບການດຳເນີນທຸລະກິດພານິດຍ໌ອີນ້ອຍຊໍນິກສ໌ດ້ວຍເຈົ້າຫນ້າທີ່ພຽງ 3 ຄົນ ບໍລິສັດໄດ້-ພັດທະນາ Application ຕ່າງ ໆ ຂຶ້ນໃຊ້ງານເອງທັງໝົດ ໂດຍໃຊ້ພາສາ JAVA JAVA Scrip C ແລະ ASP ຊຶ່ງ-ເຮັດວຽກຮ່ວມກັບຖານຂໍ້ມູນຂອງບໍລິສັດ Oracle ສຳລັບເວັບໄຊຕ໌ ເຊີລ໌ພະເວີລ໌ (Web Server) ມີຕິດຕັ້ງຢູ່ທີ່ປະເທດສະ-ຫລັດ ຯ

## 4. ການປະກອບການ

ໃນປະຈຸບັນ Thaigem. com ມີອັນມະນີໃຫ້ບໍລິການຊື້ຂາຍອອນໄລນ໌ປະມານ 140 ຊະນິດ ຄິດເປັນອັນມະນີກວ່າ 1, 300, 000 ລາຍການ ແລະມີ ລູກຄ້າເຂົ້າຢ້ຽມຊົມເວັບໄຊຕ໌ສະເລ່ຍ 1.6 ລ້ານຮິດຕໍ່ເດືອນ ຊຶ່ງຈະເຂົ້າມາເຮັດທຸນກຳຊື້ຂາຍ ສະເລ່ຍ 200 ທຸນກຳຕໍ່ມື້ ໂດຍມີມູນຄ່າຊື້ຂາຍຕໍ່ ທຸນກຳປະມານ 200 ດອນລາລ໌ສະຫລັດ ຯ

ນອກຈາກນີ້ ບໍລິສັດມີເຈົ້າຫນ້າທີ່ກວ່າ 300 ຄົນ ເຮັດຫນ້າທີ່ໃນດ້ານຂໍ້ມູນອັນມະນີເພື່ອວັດແລະຄັດຂະໜາດອັນມະນີ ຖ່າຍຮູບ ບັນຈຸພາບ-ຂຶ້ນເວັບໄຊຕ໌ ເຈົ້າຫນ້າທີ່ບັນຊີ ເຈົ້າຫນ້າທີ່ບັນຈຸຫີບຫໍ່ ແລະໃຫ້ບໍລິການຕອບບັນຫາແລະໃຫ້ຂໍ້ມູນແກ່ລູກຄ້າຊາວຕ່າງປະເທດໃນພາສາ-ຫລັກ ໆຂອງໂລກໄດ້ທຸກພາສາ ບໍ່ວ່າຈະເປັນອັງກະຫລິດ ຈີນ ຍີ່ປຸ່ນ ຝະຫລັ່ງເສດ ແລະເຍີລະມັນ ເປັນຕົ້ນ ຜ່ານທາງອີເມລ໌ຕະຫລອດ 24 ຊົ່ວໂມງ 7 ມື້ຕໍ່ອາທິດ

ໃນປະຈຸບັນບໍລິສັດມີລາຍໄດ້ຫລັກ ໆ ມາຈາກການຈຳໜ່າຍອັນມະນີເສລີ່ຍຕໍ່ເດືອນກວ່າ 30 ລ້ານບາດ (0.75 ລ້ານດອນລາລ໌ສະ-ຫລັດ ຯ) ໂດຍສາມາດ ຈຳແນກຕາມແຫລ່ງທີ່ມາຫລັກ ໆ ດັ່ງນີ້

- ລາຍໄດ້ຈາກການຈຳໜ່າຍຜ່ານ Thaigem. com ຮ້ອຍລະ 80
- ລາຍໄດ້ຈາກການຈຳໜ່າຍຜ່ານເວັບໄຊຕ໌ປະມູນ Ebay. com ຮ້ອຍລະ 5
- ລາຍໄດ້ຈາກການຈຳໜ່າຍຜ່ານເວັບໄຊຕ໌ປະມູນອື່ນ ໆ ຮ້ອຍລະ 15

ນອກຈາກນີ້ ບໍລິສັດຍັງມີລາຍໄດ້ອີກເລັກນ້ອຍມາຈາກຄ່ານາຍໜ້າ (Commission) ຈາກທີ່ຜູ້ຄ້າລາຍຍ່ອຍອື່ນ ໆສົນໃຈນຳອັນມະນີມາ-ຝາກຂາຍຜ່ານ ເວັບໄຊຕ໌ ໂດຍ Thaigem. com ຄິດບໍລິການຈາກຜູ້ຄ້າລາຍຍ່ອຍຮ້ອຍລະ 20-25 ຂອງລາຄາຂາຍ

## 5. ຈຸດເດັ່ນໃນການປະກອບທຸລະກິດ

ຈຸດເດັ່ນທີ່ສຳຄັນໃນການປະກອບການພານິດຍ໌ອີນ້ອຍຊຸ໌ນິກສ໌ຂອງ Thaigem. com ໄດ້ແກ່

1. ການສ້າງຕາສິນຄ້າ (Brand) ຕະຫລອດລະຍະເວລາກວ່າ 10 ປີທີ່ບໍລິສັດໄດ້ໃຫ້ບໍລິການລູກຄ້ານັ້ນ ບໍລິສັດໄດ້ພະຍາຍາມສ້າງ-ຄວາມໝັ້ນໃຈໃນການ ໃຫ້ບໍລິການແກ່ລູກຄ້າສະເໝີມາບໍ່ວ່າຈະເລື່ອງຂອງການຈັດສົ່ງສິນຄ້າທີ່ກົງຕໍ່ເວລາ ແລະການຂາຍສິນຄ້າທີ່ມີ-ຄຸນນະພາບຖືກຕ້ອງຕາມທີ່ສະແດງຜ່ານ ເວັບໄຊຕ໌ນອກຈາກນີ້ ຈາກຂໍ້ມູນການເຂົ້າມາໃຊ້ບໍລິການ Thaigem. com ຂອງລູກຄ້າ ພົບວ່າ ກວ່າ 80% ເປັນລູກຄ້າທີ່ຮູ້ຈັກ Thaigem. com ມາຈາກການບອກຕໍ່ກັນມາ (Word of Month) ຊຶ່ງໄດ້-ພັດທະນາແລະສະສົມຄວາມໜ້າເຊື່ອຖືຢ່າງົດມ່ຳສະເໝີ ວິທີຫລັກ ໆໃນການສ້າງຄວາມ ໜ້າເຊື່ອຖືໃຫ້ແກ່ລູກຄ້າສາມາດຈຳແນກໄດ້ ດັ່ງຕໍ່ໄປນີ້

    - ການສ້າງຜ່ານໜ້າເວັບໄຊຕ໌ຂອງບໍລິສັດ ເຊັ່ນ ການຜ່ານການກວດສອບແລະຮັບຮອງຄຸນນະພາບຂອງບໍລິສັດຈາກສະຖາບັນ-ຮັບຮອງທຸລະກິດທີ່ມີ ຊື່ສຽງແລະມີການກຳນົດນະໂຍບາຍການຄຸ້ມຄອງຂໍ້ມູນສ່ວນບຸກຄົນ (Privacy Policy) ແລະນຳ-ສະເໜີຜ່ານເວັບໄຊຕ໌ ເປັນຕົ້ນ (ດັ່ງສະແດງໜ້າແຮກຂອງເວັບໄຊຕ໌)
    - ການສ້າງຜ່ານ Ebay. com ແລະເວັບໄຊຕ໌ປະມູນອື່ນ ໃນການຂາຍສິນຄ້າຜ່ານເວັບໄຊຕ໌ປະມູນເຊັ່ນ Ebay. com ຊຶ່ງມີບໍລິການໃຫ້ຜູ້ຊື້ ປະເມີນການບໍລິການຂອງຜູ້ຂາຍນັ້ນ ວິທີການດັ່ງກ່າວຈະເປັນກົນໄກໃນການກັ່ນກະຫລອງປະຫວັດທີ່-ໜ້າເຊື່ອຖືຂອງຜູ້ຂາຍ ໃນປະຈຸບັນ Thaigem. com ໄດ້ຮັບຄຳຊົມທີ່ເປັນບວກ (Positive) ຈາກລູກຄ້າກວ່າໝື່ນລາຍ

ຫລາຍກວ່າທີ່ເປັນລົບ (Negative) ຊຶ່ງມີພຽງບໍ່ເຖິງ ຫ້າຮ້ອຍລາຍ

- o ການສ້າງຜ່ານການໃຫ້ບໍລິການ ນອກຈາກຈະໃຊ້ບໍລິການຈັດສົ່ງສິນຄ້າໃຫ້ລູກຄ້າແບບແລ່ງດ່ວນຜ່ານ FedEx ຊຶ່ງຮັບປະກັນການຈັດສົ່ງ ອັນມະນີພາຍໃນ 24-72 ຊົ່ວໂມງແລ້ວ Thaigem. com ພະຍາຍາມລຸດຄວາມສ່ຽງໃຫ້ແກ່ລູກຄ້າໂດຍການໃຊ້ບໍລິການໃຫ້ລູກຄ້າ ໂອນເງິນຜ່ານບໍລິສັດທີ່ສາມ (Escrow) ແລະໃຫ້ເວລາລູກຄ້າ 2 ມື້ກໍ່ການກວດສອບອັນມະນີກ່ອນທີ່ Escrow ຈະກໍ່ການໂອນເງິນ ໂອນເງິນໃຫ້ແກ່ Thaigem. comໃນກໍລະນີທີ່ລູກຄ້າບໍ່ພໍໃຈໃນຄຸນນະພາບຂອງສິນຄ້າ ລູກຄ້າສາມາດຄືນສິນຄ້າແລະຮັບເງິນຄືນ ຊຶ່ງ ເປັນນະໂຍບາຍ "ບໍ່ຖາມເຫດຜົນໃດ ໆ ເມື່ອມີການຄືນສິນຄ້າຈາກລູກຄ້າ" ຊຶ່ງຈະຊ່ວຍສ້າງຄວາມໝັ້ນໃຈໃນການຊື້ສິນຄ້າຂອງລູກຄ້າ

2. ການສ້າງຄວາມໄດ້ປຽບທາງດ້ານລາຄາສິນຄ້າແລະຄຸນນະພາບ ໃນປະຈຸບັນເຖິງ-ແມ່ນ-ວ່າແຫລ່ງວັດຖຸດິບຂອງໄທທີ່ມີຊື່ສຽງແລະເປັນທີ່ຮູ້ຈັກກັນ ດີທົ່ວໂລກມີແນວໂນ້ມທີ່ຂູດຫາອັນມະນີໄດ້ນ້ອຍລົງນັ້ນ Thaigem. com ຍັງສາມາດຄົງຄວາມໄດ້ປຽບທາງດ້ານລາຄາແລະຄຸນນະພາບສິນຄ້າ ຈາກບຸກຄາກອນໄທທີ່ມີຄວາມຮູ້ເປັນເລີດໃນດ້ານການຈຽນໄນອັນມະນີແລະມີຄ່າຈ້າງແຮງງານທີ່ຕໍ່າກວ່າປະເທດອື່ນ

## 6. ປັດໄຈໃນຄວາມສໍາເລັດ

ການປະກອບທຸລະກິດລ້ານຄ້າອັນມະນີອອນໄລນ໌ຂອງ Thaigem. com ຈະປະສົບຄວາມສໍາເລັດໄດ້ນັ້ນ ຂຶ້ນຢູ່ກັບ

1. ການສ້າງຊື່ຮ້ານ (Brand) ແລະພັດທະນາສ້າງຄວາມໜ້າເຊື່ອຖືໃຫ້ດີຂຶ້ນຕໍ່ໄປ ຄວາມທ້າທາຍທີ່ສໍາຄັນຂອງການດໍາເນີນທຸລະກິດພານິດຍ໌ ອີເລັກໂທນິກສ໌ສິ່ງໜຶ່ງ ຄື ການສ້າງຄວາມໜ້າເຊື່ອຖືໃຫ້ແກ່ລູກຄ້າໂດຍສະເພາະຢ່າງຍິ່ງອັນມະນີ ຊຶ່ງມີລາຄາແພງແລະຜູ້ຊື້ຕ້ອງການ ເລືອກເຟັ້ນຫລືສໍາຜັດເພື່ອພິຈາລະນາສິນຄ້າດ້ວຍຕົວເອງກ່ອນການຊື້ ດັ່ງນັ້ນ ການສ້າງຊື່ຮ້ານແລະຄວາມໜ້າເຊື່ອຖືເປັນປັດໄຈໜຶ່ງທີ່ ຈໍາເປັນຢ່າງຍິ່ງ ທີ່ຊ່ວຍໃຫ້ລູກຄ້າມີຄວາມກ້າສັ່ງຊື້ສິນຄ້າຜ່ານອອນໄລນ໌ໄດ້ໃນລະດັບໜຶ່ງ

2. ການມຸ້ງເນັ້ນຕະຫຼາດຂະໜາດໃຫຍ່ ໃນປະຈຸບັນຂະນະທີ່ເວັບໄຊຕ໌ຂອງໄທສ່ວນໃຫຍ່ມຸ້ງເນັ້ນການເຮັດທຸລະກິດກັບກຸ່ມຕະລາດຜູ້ໃຊ້ຄົນໄທ ແຕ່ Thaigem. com ກັບມອງການຂາຍສິນຄ້າໄປສູ່ຕະຫລາດໂລກ ທີ່ເປັນເຊັ່ນນີ້ກໍເພາະວ່າຜູ້ໃຊ້ອິນເທີລ໌ເນັດຂອງໄທສ່ວນໃຫຍ່ເປັນກຸ່ມ ໄວລຸ້ນຊຶ່ງຍັງມີອໍານາດຊື້ບໍ່ຫລາຍ ແລະຄົນໄທສ່ວນໃຫຍ່ຈະບໍ່ຄ່ອຍຊື້ສິນຄ້າຜ່ານອິນເທີລ໌ເນັດ ໃນກໍລະນີທີ່ເກີດຂຶ້ນກັບ Thaigem. com ລູກຄ້າສ່ວນໃຫຍ່ຫລັງຈາກທີ່ໄດ້ເຂົ້າຊົມໃນເວັບໄຊຕ໌ແລ້ວ ມັກຈະເດີນທາງມາສໍານັກງານທີ່ຈັນທະບຸລີແລະຂໍຮັບຊົມສິນຄ້າກ່ອນຊື້ ຊຶ່ງ ແຕກຕ່າງຈາກຄົນຈາກົານໍເມລິກັນທີ່ນິຍົມຊື້ສິນຄ້າຜ່ານອິນເທີລ໌ເນັດເພາະສະດວກຫລາຍກວ່າ

## 7. ທຸລະກິດອື່ນ ໆ ທີ່ມີໂມເດນຄ້າຍກັນ

ບໍລິສັດອື່ນທີ່ມີໂມເດນໃນການດໍາເນີນທຸລະກິດເປັນຮ້ານຄ້າຂາຍອັນມະນີອອນໄລນ໌ທີ່ຄ້າຍກັນກັບ Thaigem. com ໄດ້ແກ່ Tiffany& Co. (ເຄື່ອງ ປະດັບຂໍ່ງົດຫລັດ ຯ www. tiffany. com) Hamilton Jewelry (ເຄື່ອງປະດັບຂໍ່ງົດຫລັດ ຯ www. hamiltonjewelry. com) ເປັນຕົ້ນ ຕົວຢ່າງເວັບໄຊຕ໌ ທີ່ເປັນລ້ານຄ້າຂາຍອັນມະນີອອນໄລນ໌ໃນຕ່າງປະເທດອື່ນ ໆ ເຊັ່ນ Chowsangsang. com (ເຄື່ອງປະດັບຂອງຮ່ອງກົງ www. chowsangsang. com) Luxlook. com (ເຄື່ອງປະດັບຂອງສະຫະຫລັດ ຯ ອັງກິດ ແລະເຢີລະມັນ www. luxlook. com) ເປັນຕົ້ນ

## 8. ໂອກາດທາງທຸລະກິດຂອງຜູ້ປະກອບການລາວ